ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 40 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 27 ພະຈິກ 2018

ສຳນັກງານ ຄຄຊ
ເລກ 1251
ວັນທີ 28 NOV 2018
ທລະສັບ 021 217770

# ບົດບັນທຶກກອງປະຊຸມ

## ສ່ອງແສງວຽກງານສາຍລັດ ປະຈຳເດືອນ ຕຸລາ ປີ 2018

ໃນຕອນເຊົ້າຂອງວັນທີ 09 ພະຈິກ 2018 ເວລາ 08:30 ໂມງ ຢູ່ທີ່ຫ້ອງປະຊຸມຊັ້ນ IV ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ຕຸລາ 2018 ພາຍໃຕ້ການເປັນປະທານຂອງ ທ່ານ ສອນໄຊ ສິດພະໄຊ ຮັກສາການຜູ້ວ່າການ ທຫລ ໂດຍມີບັນດາຄະນະກົມ ແລະ ຄະນະອຳນວຍການທະນາຄານທຸລະກິດລັດເຂົ້າຮ່ວມ (ດັ່ງລາຍຊື່ຄັດຕິດມາພ້ອມນີ້). ກອງປະຊຸມໄດ້ຮັບຟັງການລາຍງານວຽກງານອັນພົ້ນເດັ່ນຂອງບັນດາກົມ-ທຽບເທົ່າກົມພາຍໃນ ທຫລ ແລະ ທະນາຄານທຸລະກິດລັດ ທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະ 1 ເດືອນຜ່ານມາ ພ້ອມດ້ວຍບັນດາຂໍ້ສະເໜີຕ່າງໆ ຊຶ່ງກອງປະຊຸມໄດ້ປຶກສາຫາລື ແລະ ເອກະພາບກຳນົດວຽກງານຈຸດສຸມໃນຕໍ່ໜ້າ ດັ່ງນີ້:

**I. ການລາຍງານສະພາບພົ້ນເດັ່ນຂອງບັນດາກົມ-ທຽບເທົ່າກົມ ແລະ ທະນາຄານທຸລະກິດລັດ**

ໂດຍລວມໄດ້ຮັບຜົນສຳເລັດຫຼາຍດ້ານໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ເປັນຕົ້ນ: ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ແມ່ນຍັງຢູ່ໃນຂອບທີ່ກຳນົດໄວ້. ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ແມ່ນໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ, ກວດກາ ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຢ່າງເປັນປົກກະຕິ. ສຳເລັດການປະກາດ ແລະ ນຳໃຊ້ໂປຼແກຣມຕະຫຼາດລະຫວ່າງທະນາຄານ 2018. ສຳເລັດການກວດສອບ ປະຈຳປີ 2017 ຈາກອົງການກວດສອບແຫ່ງລັດ. ການເຄື່ອນໄຫວວຽກງານຂອງທະນາຄານທຸລະກິດລັດ ມີຫຼາຍອັນພົ້ນເດັ່ນ ເຊັ່ນ: ທຄຕລ ສຳເລັດການດຳເນີນການໂອນບໍລິການທັງໝົດໃນນະຄອນຫຼວງວຽງຈັນຄືນໃໝ່ໂດຍໃຫ້ຂຶ້ນກັບ 03 ສາຂາຄື: ສາຂານະຄອນ ຫຼວງວຽງຈັນ, ສາຂາດົງໂດກ ແລະ ສາຂາໄຊເສດຖາ ແລະ ທພລ ສຳເລັດການພັດທະນາລະບົບຊຳລະ National Single Window. ພ້ອມນີ້, ທະນາຄານແຫ່ງ ສປປ ລາວ ໄດ້ອອກແຈ້ງການ ເຖິງບັນດາສະຖາບັນການເງິນໃນຂອບເຂດທົ່ວປະເທດຫ້າມຖືຄອງ, ດຳເນີນທຸລະກຳ ຫຼື ມີສ່ວນຮ່ວມໃນການສະໜັບສະໜູນການເຮັດທຸລະກຳທີ່ກ່ຽວຂ້ອງກັບເງິນຄຣິບໂຕ ແລະ ອອກແຈ້ງການເຖິງບຸກຄົນ, ນິຕິບຸກຄົນ, ພໍ່ຄ້າຊາວຂາຍ ແລະ ບັນດາຫ້າງຮ້ານຕ່າງໆ ໃນຂອບເຂດທົ່ວປະເທດ ບໍ່ໃຫ້ນຳເອົາທະນະບັດ (ເງິນກີບ) ໃບໃໝ່ໄປວາງຂາຍ ຫຼື ແລກປ່ຽນເພື່ອເອົາກຳໄລ.

**II. ທ່ານປະທານມີຄຳເຫັນຕໍ່ການລາຍງານ ແລະ ຂໍ້ສະເໜີຕ່າງໆ**

1. ໃຫ້ບັນດາກົມ, ທຽບເທົ່າກົມພາຍໃນ ທຫລ ແລະ ທະນາຄານທຸລະກິດລັດ ກາໄດ້ຄາດໝາຍສູ້ຊົນຕົ້ນຕໍດ້ານເງິນຕາ ປະຈຳປີ 2019 ຄື: 1) ຄວບຄຸມປະລິມານເງິນ M2 ໃຫ້ເພີ່ມຂຶ້ນໃນລະດັບບໍ່ເກີນ 20% ທຽບໃສ່ປີຜ່ານມາ; 2) ອັດຕາແລກປ່ຽນໃຫ້ມີຄວາມສະຫງົບປົກກະຕິ ແລະ ໝັ້ນຄົງໃນຂອບ ±5% ທຽບກັບເງິນຕາຕ່າງປະເທດສະກຸນຫຼັກ; 3)

ຮັບປະກັນໃຫ້ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າໄດ້ຢ່າງໜ້ອຍ 3 ເດືອນ; 4) ຍອດເງິນຝາກທະນາຄານທຸລະກິດບັນລຸໄດ້ 59,80% ຂອງ GDP ໃນທ້າຍປີ 2019; 5) ຍອດສິນເຊື່ອຂອງທະນາຄານທຸລະກິດ ຢູ່ໃນລະດັບ 71,20% ຂອງ GDP ໃນທ້າຍປີ 2019 (ປັດຈຸບັນຕົວເລກດັ່ງກ່າວ ແມ່ນໄດ້ປັບລົງມາ ເປັນ 55% ຂອງ GDP ໃນທ້າຍປີ 2019);

2. ວຽກງານຈັດຊື້-ຈັດຈ້າງ: ມອບໃຫ້ຫ້ອງການ ທຫລ ປະຕິບັດການຈັດຊື້ທີ່ຕິດພັນກັບວຽກງານ IT ເປັນວຽກບູລິມະສິດ ໂດຍເຮັດໃຫ້ຖືກຂັ້ນຕອນ ແລະ ໄວ. ພ້ອມດຽວກັນນັ້ນ, ທາງກົມເຕັກໂນໂລຊີຂໍ້ມູນຂ່າວສານ ກໍ່ຕ້ອງໄດ້ຂຶ້ນແຜນຈັດຊື້ອາໄລ່, ອຸປະກອນສຳຮອງໄວ້ ເພື່ອສາມາດປ່ຽນຖ່າຍເອງໃນຍາມຊຸກເສີນ;

3. ວຽກງານບັນຊີ-ການເງິນ: 1) ຕິດພັນກັບການຈັດຕັ້ງປະຕິບັດຕາມບົດລາຍງານຖານະການເງິນຕາມມາດຕະຖານສາກົນ (IFRS) ຂອງທະນາຄານການຄ້າຕ່າງປະເທດ ມະຫາຊົນ ຊຶ່ງໃນຕໍ່ໜ້າຈະປະຕິບັດຕາມ IFRS ສະບັບທີ 9 ນັ້ນ, ມອບໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອອກແຈ້ງການເພື່ອເປັນບ່ອນອີງໃຫ້ທະນາຄານກ່ຽວຂ້ອງ ເນື່ອງຈາກຕິດພັນກັບເວລາທີ່ກວດສອບພາຍນອກລົງມາກວດ ໂດຍໃຫ້ກວດສອບ ມີບ່ອນອີງວ່າຈະຕີລາຄາທະນາຄານທີ່ຖືກກວດສອບນັ້ນປະຕິບັດຕາມມາດຕະຖານ IFRS ໄດ້ຫຼືບໍ່ແນວໃດ; ແລະ 2) ສຳລັບກົມກອງໃດ ທີ່ມີໂຄງການຕິດພັນກັບການກໍ່ສ້າງໂຄງລ່າງພື້ນຖານ ແລະ ປະກອບວັດຖຸເຕັກນິກມູນຄ່າສູງ ແມ່ນໃຫ້ຂຶ້ນແຜນຄົບຖ້ວນ ແລະ ປະສານສົມທົບກັບຫ້ອງການ ເພື່ອຫຼີກລ້ຽງການເຊັນສັນຍາໄປແລ້ວ ພັດບໍ່ມີງົບປະມານຮອງຮັບ;

4. ວຽກງານຮ່ວມມືສາກົນ: ໃຫ້ກົມພົວພັນສາກົນ ສະໜອງຂໍ້ມູນທີ່ຕິດພັນກັບເສດຖະກິດ ຂອງ ສປປ ລາວ ໃຫ້ແກ່ AMRO ໂດຍໃຫ້ເອົາຂໍ້ມູນຊຸດດຽວກັນກັບທີ່ໄດ້ສະໜອງໃຫ້ກັບ IMF;

5. ວຽກງານຕິດພັນກັບກົມເງິນຕາ: 1) ການເບີກຈ່າຍເງິນໃບໃໝ່ໃຫ້ບັນດາທະນາຄານທຸລະກິດ ເພື່ອແລກປ່ຽນໃຫ້ປະຊາຊົນ ຕ້ອງໃຫ້ແກະຢ່າງປູາສະຕິກທີ່ຫຸ້ມຫໍ່ໂຄ້ນເງິນອອກເສຍກ່ອນ ແລະ 2) ໃຫ້ປະສານສົມທົບກັບຄູບາ-ອາຈານທາງສາດສະໜາ ຊ່ວຍລະດົມແນວຄິດໃຫ້ປະຊາຊົນຊາບ ແລະ ເຂົ້າໃຈກ່ຽວກັບການນຳເງິນມາທຳບຸນ ບໍ່ຈຳເປັນຕ້ອງແມ່ນແຕ່ໃບໃໝ່ ເພື່ອໃຫ້ເງິນກີບສາມາດໝູນໄປຕາມຮອບວຽນ ແລະ ເປັນການປະຢັດຕົ້ນທຶນໃນການຜະລິດ;

## III. ທິດຊີ້ນຳຂອງປະທານກອງປະຊຸມ ເພື່ອເປັນແຜນວຽກຈຸດສຸມຕໍ່ໜ້າ

1. ໃຫ້ບັນດາກົມ, ທຽບເທົ່າກົມພາຍໃນ ທຫລ ແລະ ບັນດາທະນາຄານທຸລະກິດລັດ ເອົາໃຈໃສ່ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການຂອງຫ້ອງວ່າການສູນກາງພັກ (ເລກທີ 40; ລົງວັນທີ 17 ຕຸລາ 2018) ໂດຍສະເພາະວຽກງານວິຊາສະເພາະທີ່ຕິດພັນກັບຂະແໜງທະນາຄານ ຄື: *"ສຸມໃສ່ການກຳນົດ ແລະ ປະຕິບັດມາດຕະການ ຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ປັບປຸງອັດຕາດອກເບ້ຍ, ສ້າງເງື່ອນໄຂໃຫ້ພາກທຸລະກິດ ແລະ ຜູ້ປະກອບການ ເຂົ້າເຖິງແຫຼ່ງທຶນ ເພື່ອດຳເນີນການຜະລິດທຸລະກິດ"*. ໂດຍໃຫ້ຄົ້ນຄວ້າມາດຕະການ, ວິທີການປັບປຸງຜັນຂະຫຍາຍເປັນແຜນວຽກອັນລະອຽດ;

2. ໃຫ້ເອົາໃຈໃສ່ສ້າງຂະບວນການ ເພື່ອເປັນການຂໍ່ານັບຮັບຕ້ອນວັນຊາດທີ 2 ທັນວາ ຄົບຮອບ 43 ປີ ຢ່າງເປັນຂະບວນຟົດຟື້ນ;

3. ໃຫ້ທະນາຄານແຫ່ງ ສປປ ລາວ ເອົາໃຈໃສ່ເພີ່ມຕື່ມຄື:

– ສືບຕໍ່ກະກຽມເນື້ອໃນໃຫ້ແກ່ການຈັດກອງປະຊຸມສະພາບໍລິຫານ ທຫລ ສະໄໝສາມັນ ຄັ້ງທີ I ປະຈຳປີ 2018;

– ຕິດຕາມການປະກອບຄຳເຫັນຕໍ່ການກູ້ຢືມເງິນ ເພື່ອສົ່ງເສີມ SME ຈຳນວນ 300 ລ້ານໂດລາສະຫະລັດຈາກສະພາແຫ່ງຊາດ ແລະ ກະກຽມເງື່ອນໄຂ ໃນການເຊັນສັນຍາກູ້ຢືມເງິນດັ່ງກ່າວຮ່ວມກັບ CDB;

– ປັບປຸງແຜນແບບວິທີການເຮັດວຽກ ໂດຍສະເພາະຂອດການປະສານງານລະຫວ່າງກັນຂອງບັນດາກົມໃຫ້ດີຂຶ້ນກວ່າເກົ່າ ພ້ອມທັງປັບປຸງກົນໄກການຈັດຕັ້ງປະຕິບັດວຽກງານໃຫ້ວ່ອງໄວຂຶ້ນເຕີມ;

– ປັບປຸງແຜນແບບວິທີການເຮັດວຽກ  ໂດຍສະເພາະຂອດການປະສານງານລະຫວ່າງກັນຂອງບັນດາກົມໃຫ້ດີຂຶ້ນກວ່າເກົ່າ ພ້ອມທັງປັບປຸງກົນໄກການຈັດຕັ້ງປະຕິບັດວຽກງານໃຫ້ວ່ອງໄວຂຶ້ນເຕີມ;

– ວຽກງານບັນຊີການເງິນ: ໃຫ້ສຳເລັດການສະຫຼຸບການຈັດຕັ້ງປະຕິບັດງົບປະມານ ປະຈຳປີ 2018 ແລະ ຂຶ້ນແຜນການປະຈຳປີ 2019;

– ວຽກງານສະຖາບັນການເງິນ: ໃຫ້ສືບຕໍ່ປັບປຸງລະບຽບກ່ຽວກັບການຈັດຊັ້ນໜີ້ຂອງບໍລິສັດເຊົ່າສິນເຊື່ອ;

4. ໃຫ້ບັນດາທະນາຄານທຸລະກິດເອົາໃຈໃສ່ແຕ່ລະດ້ານເຊັ່ນ:

– ສືບຕໍ່ດຳເນີນການພັດທະນາລະບົບ  ເພື່ອໃຫ້ສາມາດຊຳລະຄ່າພາສີທີ່ດິນຜ່ານລະບົບທະນາຄານ;  ພ້ອມທັງພັດທະນາລະບົບການຈັດເກັບຄ່າທຳນຽມຜູ້ໂດຍສານ ແລະ ພາຫະນະແບບເອເລັກໂຕນິກ (Smart VAT ໄລຍະ 2);

– ສືບຕໍ່ດຳເນີນໂຄງການຂາຍຮຸ້ນ ທຄຕລ (ຮຸ້ນກະຊວງການເງິນ) ຈຳນວນ 19%;

– ສືບຕໍ່ເອົາໃຈໃສ່ພັດທະນາການອອກບັດສາກົນ Union Pay ໄລຍະ 3; ພ້ອມທັງກະກຽມຄວາມພ້ອມທຸກດ້ານໃນການເປີດໂຕໂຄງການອອກບັດສາກົນ union pay ແລະ LDB Trust;

ກອງປະຊຸມດັ່ງກ່າວໄດ້ປິດລົງຂອງວັນດຽວກັນໃນເວລາ 11:00  ໂມງ.

ປະທານກອງປະຊຸມ

ສອນໄຊ ສິດພະໄຊ

ຜູ້ບັນທຶກ

ນ-ສົມສະໄໝ